**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ ເລກທີ 2980 /ກງ

ນະຄອນຫຼວງວຽງຈັນ, ວັນທີ 22 ສິງຫາ 2024

# ຂໍ້ຕົກລົງ
# ວ່າດ້ວຍການປະກັນໄພລົດແບບບັງຄັບ

- ອີງຕາມ ກົດໝາຍວ່າດ້ວຍການປະກັນໄພ (ສະບັບປັບປຸງ), ສະບັບເລກທີ 78/ສພຊ, ລົງວັນທີ 29 ພະຈິກ 2019;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ, ສະບັບ ເລກທີ 353/ນຍ, ລົງວັນທີ 02 ສິງຫາ 2024;
- ອີງຕາມ ໜັງສືສະເໜີຂອງ ກົມປະຕິຮູບລັດວິສາຫະກິດ ແລະການປະກັນໄພ, ສະບັບເລກທີ 0832/ປລປ ລົງວັນທີ 23 ກໍລະກົດ 2024.

## ລັດຖະມົນຕີກະຊວງການເງິນ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ນິຍາມ, ຂອບເຂດການນຳໃຊ້ ແລະ ຫຼັກການ ກ່ຽວກັບ ການຄຸ້ມຄອງປະກັນໄພລົດແບບບັງຄັບ ເພື່ອຮັບປະກັນເຮັດໃຫ້ບຸກຄົນທີສາມທີ່ເປັນຜູ້ຖືກເຄາະຮ້າຍຕາມເສັ້ນທາງ ສາມາດໄດ້ຮັບການຮັກສາອາການບາດເຈັບ ທີ່ສະຖານທີ່ປິ່ນປົວຢ່າງທັນການ ແລະ ໄດ້ຮັບສິນທົດແທນຄວາມເສຍຫາຍໃນກໍລະນີເສຍຊີວິດ ຫຼື ພິການຖາວອນ, ຄວາມເສຍຫາຍທາງດ້ານວັດຖຸ ແນໃສ່ສົ່ງເສີມ ແລະ ສະໜັບສະໜູນໃຫ້ການປະກັນໄພເຂົ້າມີສ່ວນຮ່ວມໃນການບັນເທົາຄວາມເດືອດຮ້ອນແກ່ຜູ້ຖືກເຄາະຮ້າຍຕາມເສັ້ນທາງ.

**ມາດຕາ 2 ການປະກັນໄພລົດແບບບັງຄັບ**

ການປະກັນໄພລົດແບບບັງຄັບ ແມ່ນການປະກັນໄພຂັ້ນພື້ນຖານ ຕາມການກຳນົດໃນກົດໝາຍວ່າດ້ວຍການຈະລາຈອນທາງບົກ ສຳລັບຍານພາຫະນະທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກ ຕ້ອງມີປະກັນໄພແບບບັງຄັບ ປະກອບດ້ວຍ ລົດສອງລໍ້, ລົດສາມລໍ້, ລົດສີ່ລໍ້ຂຶ້ນໄປ, ລວມທັງພາຫະນະກົນຈັກໜັກທຸກປະເພດທີ່ຂັບເຄື່ອນດ້ວຍເຄື່ອງຈັກ, ໃນນີ້ ແມ່ນລວມທັງພາຫະນະທີ່ນຳໃຊ້ນ້ຳມັນ, ພະລັງງານໄຟຟ້າ ຫຼື ພະລັງງານທາງ

ຂັບເຄື່ອນດ້ວຍເຄື່ອງຈັກ, ໃນນີ້ ແມ່ນລວມທັງພາຫະນະທີ່ນຳໃຊ້ນ້ຳມັນ, ພະລັງງານໄຟຟ້າ ຫຼື ພະລັງງານທາງເລືອກອື່ນ. ສຳລັບຍານພາຫະນະ ທີ່ມີປະກັນໄພລົດແບບສະໝັກໃຈແລ້ວ ແມ່ນບໍ່ຈຳເປັນຕ້ອງມີປະກັນໄພລົດແບບບັງຄັບຕື່ມກໍໄດ້.

**ມາດຕາ 3 ການອະທິບາຍຄຳສັບ**

ບັນດາຄຳສັບ ທີ່ມີຢູ່ໃນຂໍ້ຕົກລົງສະບັບນີ້ ມີເນື້ອໃນ ແລະ ຄວາມໝາຍ ດັ່ງນີ້:

1. ຜູ້ປະກັນໄພ ໝາຍເຖິງ ບໍລິສັດປະກັນໄພທົ່ວໄປທີ່ດຳເນີນທຸລະກິດໃນ ສປປ ລາວ ທີ່ເປັນຄູ່ສັນຍາກັບຜູ້ຊື້ປະກັນໄພ ໃນການຕົກລົງເຮັດສັນຍາປະກັນໄພລົດແບບບັງຄັບ;
2. ຜູ້ຊື້ປະກັນໄພ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນຄູ່ສັນຍາກັບຜູ້ປະກັນໄພ ໃນການຕົກລົງເຮັດສັນຍາປະກັນໄພລົດແບບບັງຄັບ, ຜູ້ຊື້ປະກັນໄພ ອາດຈະແມ່ນ ເຈົ້າຂອງລົດທີ່ໄດ້ຮັບການປະກັນໄພ ຫຼື ຜູ້ຂັບຂີ່ລົດທີ່ໄດ້ຮັບການປະກັນໄພ;
3. ລົດທີ່ໄດ້ຮັບການປະກັນໄພ ໝາຍເຖິງ ລົດທີ່ໄດ້ຮັບການຄຸ້ມຄອງຕາມສັນຍາປະກັນໄພ;
4. ຜູ້ຂັບຂີ່ ໝາຍເຖິງ ຜູ້ຂັບຂີ່ລົດທີ່ໄດ້ຮັບການປະກັນໄພ ໃນເວລາເກີດອຸບັດຕິເຫດ;
5. ບຸກຄົນທີສາມ ໝາຍເຖິງ ບຸກຄົນພາຍໃນ (ຜູ້ຂັບຂີ່, ຜູ້ໂດຍສານ, ບຸກຄົນທີ່ຍ່າງຕາມແຄມທາງ, ບຸກຄົນທົ່ວໄປ) ເຊິ່ງໄດ້ຮັບຜົນກະທົບຈາກລົດທີ່ໄດ້ຮັບການປະກັນໄພ ບໍ່ຄຸ້ມຄອງຜູ້ຂັບຂີ່ ແລະ ຜູ້ໂດຍສານລົດທີ່ພາໃຫ້ເກີດອຸປະຕິເຫດ;
6. ຍານພາຫະນະ ໝາຍເຖິງ ຍານພາຫະນະທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຈາກພາກສ່ວນທີ່ກ່ຽວຂ້ອງ;
7. ການຂາຍໂດຍຜ່ານຊ່ອງທາງອື່ນ ເປັນການຈຳໜ່າຍນອກເໜືອຈາກ ການຂາຍໂດຍທາງກົງ ແລະ ການຂາຍໂດຍຄົນກາງປະກັນໄພ ທີ່ໄດ້ຮັບການເຫັນດີຈາກກະຊວງການເງິນ ເຊິ່ງເຮັດໜ້າທີ່ຊ່ວຍຈຳໜ່າຍຜະລິດຕະພັນປະກັນໄພລົດແບບບັງຄັບ ເພື່ອແລກກັບຄ່າຕອບແທນການຂາຍ ຈາກ ຜູ້ປະກັນໄພ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ປະກັນໄພ, ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ເປັນເຈົ້າຂອງກຳມະສິດ ຫຼື ເຊົ່າຊື້ ຫຼື ຄອບຄອງນຳໃຊ້ຍານພາຫະນະທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກ ແລະ ພະຫະນະທີ່ແລ່ນດ້ວຍພະລັງງານສະອາດ ທີ່ໄດ້ຮັບການຈົດທະບຽນໃນ ສປປ ລາວ.

ສຳລັບ ພາຫະນະຈົດທະບຽນຢູ່ຕ່າງປະເທດ ທີ່ເຂົ້າມາສັນຈອນຕາມເສັ້ນທາງໃນ ສປປ ລາວ ແມ່ນໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ແລະ ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ຂອງ ສປປ ລາວ ແລະ ບັນດາ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ສັນຍາປະກັນໄພລົດແບບບັງຄັບ

ສັນຍາປະກັນໄພລົດແບບບັງຄັບ ແມ່ນ ເອກະສານການຕົກລົງເງື່ອນໄຂການປະກັນໄພ ລະຫວ່າງ ຜູ້ປະກັນໄພ ແລະ ຜູ້ຊື້ປະກັນໄພ ເຊິ່ງພາໃຫ້ເກີດ ສິດ ແລະ ພັນທະ ທາງແພ່ງຮ່ວມກັນ, ເຊິ່ງເລີ່ມມີຜົນສັກສິດ ພາຍຫຼັງທີ່ຜູ້ຊື້ປະກັນໄພ ໄດ້ຈ່າຍຄ່າປະກັນໄພຄົບຖ້ວນໃຫ້ແກ່ຜູ້ປະກັນໄພ, ນາຍໜ້າ ແລະ ຕົວແທນປະກັນໄພ; ສັນຍາປະກັນໄພແບບບັງຄັບ ປະກອບມີ ໜັງສືສັນຍາປະກັນໄພ ແລະ ເງື່ອນໄຂການປະກັນໄພ.

**ມາດຕາ 5 ໜັງສືສັນຍາປະກັນໄພ**

ໜັງສືສັນຍາປະກັນໄພລົດແບບບັງຄັບ ປະກອບມີເນື້ອໃນ ດັ່ງນີ້:

1. ການອ້າງອີງສັນຍາ (Reference):
   - ເລກທີສັນຍາ (Policy Number);
   - ວັນທີອອກສັນຍາ (Issued Date);
   - ວັນທີເລີ່ມຄຸ້ມຄອງ (Inception date);
   - ວັນທີສິ້ນສຸດສັນຍາ (Expiration Date).
2. ຂໍ້ມູນຂອງຜູ້ປະກັນໄພ (Insurer's Information):
   - ຊື່ ແລະ ທີ່ຢູ່ຂອງຜູ້ປະກັນໄພ (Name and address of Insurer);
   - ເບີໂທ/ສາຍດ່ວນ (Tel Number/ Hotline Number).
3. ຂໍ້ມູນຂອງຜູ້ຊື້ປະກັນໄພ (Insured's Information):
   - ຊື່ຜູ້ຊື້ປະກັນໄພ (Name of Insured);
   - ເບີໂທ (Tel Number).
4. ຂໍ້ມູນຂອງພາຫະນະທີ່ໄດ້ຮັບການປະກັນໄພ (Vehicle's Information):
   - ປະເພດລົດ (Type of Vehicle);
   - ຍີ່ຫໍ້ (Make of the car);
   - ທະບຽນລົດ (License plate);
   - ເລກຈັກ (Engine number);
   - ເລກຖັງ (Chassis number);
   - ຄວາມແຮງ (Power) (Cubic Capacity-cc);
   - ນ້ຳໜັກ (Gross Tounage) (Ton);
   - ຈຳນວນບ່ອນນັ່ງ (Number of Seats);
   - ປະເພດການນຳໃຊ້ລົດ (Type of use);
   - ຊື່ ແລະ ນາມສະກຸນ ເຈົ້າຂອງຍານພາຫະນະ (Name and Surname of Vehicle Owner).
5. ການຄຸ້ມຄອງ (Coverage): ຕາມການກຳນົດໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

6. ການຊຳລະ (Payment):
   - ຄ່າປະກັນໄພ (Premium fee);
   - ຄ່າອາກອນມູນຄ່າເພີ່ມ (VAT fee);
   - ຄ່າຂຶ້ນທະບຽນ (Registry fee);
   - ຄ່າປະກອບເຂົ້າໃນກອງທຶນປົກປ້ອງຜູ້ຖືກເຄາະຮ້າຍຕາມເສັ້ນທາງ (RVPF) 1% ຂອງຄ່າປະກັນໄພ;
   - ຄ່າທຳນຽມປະກັນໄພ ຕ້ອງຈ່າຍກ່ອນ ຈຶ່ງຈະເລີ່ມມີການຄຸ້ມຄອງ;
   - ລວມເງິນຕ້ອງຊຳລະ (Total payment).
7. ສະຕິກເກີ້ ແລະ ຫຼື QR Code (ປະກອບມີເນື້ອໃນສຳຄັນ ກ່ຽວກັບສັນຍາປະກັນໄພລົດແບບບັງຄັບຄື: ເລກທີ, ລົງວັນທີ, ເລກທະບຽນລົດທີ່ໄດ້ຮັບການປະກັນໄພ, ຊື່ຜູ້ປະກັນໄພ) ເຊິ່ງຈະຖືກຕັດອອກຈາກດ້ານຂວາເທິງສຸດຂອງໜັງສືສັນຍາປະກັນໄພ ເພື່ອເປັນສະຕິກເກີ້ຕິດດ້ານໜ້າລົດທີ່ໄດ້ຮັບການປະກັນໄພ.
8. ໜັງສືສັນຍາປະກັນໄພລົດແບບບັງຄັບ ແມ່ນຜູ້ປະກັນໄພ ເປັນຜູ້ອອກແບບ ເຊິ່ງເນື້ອໃນຂອງໜັງສືສັນຍາ ແມ່ນອີງຕາມເນື້ອໃນທີ່ໄດ້ລະບຸໃນມາດຕານີ້.

**ມາດຕາ 6 ເງື່ອນໄຂຂອງການປະກັນໄພລົດແບບບັງຄັບ**

1. **ເງື່ອນໄຂຄຸ້ມຄອງ**

   ການປະກັນໄພລົດແບບບັງຄັບ ຄຸ້ມຄອງສະເພາະຄວາມເສຍຫາຍ ຕໍ່ ບຸກຄົນທີສາມ ໃນກໍລະນີບາດເຈັບ, ເສຍຊີວິດ ຫຼື ພິການຖາວອນ, ຄວາມເສຍຫາຍທາງດ້ານວັດຖຸ ຈາກອຸປະຕິເຫດທີ່ເກີດໂດຍລົດ ທີ່ໄດ້ຮັບການປະກັນໄພ ເປັນຕົ້ນເຫດ.

2. **ເງື່ອນໄຂບໍ່ຄຸ້ມຄອງ**

   ການປະກັນໄພລົດແບບບັງຄັບ ບໍ່ຄຸ້ມຄອງ ກໍລະນີ:

   **ກ.** ຄວາມເສຍຫາຍ ຕໍ່ ລົດທີ່ໄດ້ຮັບການປະກັນໄພ;

   **ຂ.** ຄວາມເສຍຫາຍ ຕໍ່ ຊີວິດ ແລະ ຊັບສິນ ຂອງຜູ້ຂັບຂີ່ ແລະ ຜູ້ໂດຍສານໃນລົດທີ່ໄດ້ຮັບການປະກັນໄພ;

   **ຄ.** ຄວາມເສຍຫາຍທີ່ເກີດຂຶ້ນໂດຍເຈດຕະນາຂອງຜູ້ຂັບຂີ່ ຫຼື ຜູ້ຖືກເຄາະຮ້າຍ ທີ່ພາໃຫ້ເກີດມີອຸບັດຕິເຫດ;

   **ງ.** ກໍລະນີ ຜູ້ຂັບຂີ່ ລ່ວງລະເມີດໄຟອຳນາດ ຫຼື ກົດໝາຍ ທີ່ພາໃຫ້ເກີດອຸບັດຕິເຫດ;

   **ຈ.** ກໍລະນີ ຜູ້ຂັບຂີ່ ໃບຂັບຂີ່ຍານພາຫະນະ ໝົດກຳນົດເກີນ 03 ເດືອນ ຫຼື ໃບຂັບຂີ່ບໍ່ຖືກຕ້ອງຕາມຊະນິດຍານພາຫະນະ;

**ສ.** ກໍລະນີ ຜູ້ຂັບຂີ່ ມີຄວາມເຂັ້ມຂຸ້ນຂອງທາດເຫຼົ້າໃນຮ່າງກາຍເກີນປະລິມານຕາມທີ່ກົດໝາຍກຳນົດ;

**ຊ.** ກໍລະນີ ຜູ້ຂັບຂີ່ ນຳໃຊ້ຢາເສບຕິດອື່ນໆ ທີ່ເກືອດຫ້າມ;

**ຍ.** ກໍລະນີ ທີ່ມີຄວາມເສຍຫາຍທີ່ເກີດຈາກໄພພິບັດທຳມະຊາດ, ສົງຄາມການແຕກຕົວຂອງວັດຖຸປະລຳມະນູນ, ການແຜ່ລັງສີ, ການກະທົບກັບກະມັນຕະພາບລັງສີຈາກເຊື້ອໄຟປະລຳມະນູນ.

### 3. ການສິ້ນສຸດສັນຍາ

ສັນຍາປະກັນໄພລົດແບບບັງຄັບ ຈະສິ້ນສຸດໃນກໍລະນີ:

ກ. ທະບຽນຍານພາຫະນະ ໄດ້ຖືກຍົກເລີກຈາກພາກສ່ວນທີ່ກ່ຽວຂ້ອງ;

ຂ. ຄົບກຳນົດສັນຍາ ໃນເວລາທ່ຽງຄືນ 23:59 ໂມງ ຂອງວັນທີສິ້ນສຸດສັນຍາ.

### 4. ການຮ້ອງຂໍສິນປະກັນໄພ

ຜູ້ຊື້ປະກັນໄພ ຕ້ອງແຈ້ງໃຫ້ຜູ້ປະກັນໄພຊາບທັນທີ ພາຍຫຼັງການເກີດອຸປະຕິເຫດ ເພື່ອລົງກວດກາ ແລະ ເກັບກຳຂໍ້ມູນຄວາມເສຍຫາຍ, ຫຼັງຈາກນັ້ນ ຜູ້ຊື້ປະກັນໄພ ຕ້ອງສະເໜີຮ້ອງຂໍສິນປະກັນໄພ ເປັນລາຍລັກອັກສອນ ຫຼື ທາງເອເລັກໂຕຣນິກ ເຖິງ ຜູ້ປະກັນໄພ ພາຍໃນ 07 ວັນ ຫຼັງຈາກວັນທີ່ມີອຸປະຕິເຫດເກີດຂຶ້ນ, ເອກະສານທີ່ຕ້ອງປະກອບໃນການຮ້ອງຂໍສິນປະກັນໄພ ປະກອບມີ:

1) ສຳເນົາ ໃບທະບຽນຍານພາຫະນະ;
2) ສຳເນົາ ໃບຂັບຂີ່ຍານພາຫະນະ ຂອງຜູ້ຂັບຂີ່;
3) ສຳເນົາ ບັດປະຈຳຕົວ, ໜັງສືຜ່ານແດນ ຫຼື ເອກະສານອື່ນໆ ທີ່ຕິດພັນກັບຜູ້ຂັບຂີ່;
4) ສຳເນົາ ໜັງສືສັນຍາປະກັນໄພ;
5) ເອກະສານຢັ້ງຢືນການແພດ;
6) ເອກະສານຢັ້ງຢືນການເສຍຊີວິດ;
7) ເອກະສານຢັ້ງຢືນຈາກເຈົ້າໜ້າທີ່ຕຳຫຼວດຈາລະຈອນ;
8) ເອກະສານອື່ນໆ ທີ່ກ່ຽວຂ້ອງກັບອຸປະຕິເຫດ.

ຜູ້ປະກັນໄພ ຕ້ອງພິຈາລະນາ ການຮ້ອງຂໍສິນປະກັນໄພ ພາຍໃນ 07 ວັນ ຫຼັງຈາກໄດ້ຮັບເອກະສານການຮ້ອງຂໍສິນປະກັນໄພຢ່າງຄົບຖ້ວນ; ໃນກໍລະນີ ພິຈາລະນາປະຕິເສດຕໍ່ການຮ້ອງຂໍສິນປະກັນໄພ ຜູ້ປະກັນໄພຕ້ອງແຈ້ງເຫດຜົນໃນການປະຕິເສດ ເປັນລາຍລັກອັກສອນ ພາຍໃນ 15 ຫຼັງຈາກທີ່ໄດ້ຮັບເອກະສານການຮ້ອງຂໍສິນປະກັນໄພຢ່າງຄົບຖ້ວນ.

ການຮ້ອງຂໍສິນປະກັນໄພ ມີໄລຍະເວລາ 01 ປີ ນັບຈາກວັນທີ່ມີອຸປະຕິເຫດເກີດຂຶ້ນ ຍົກເວັ້ນໃນກໍລະນີທີ່ພາໃຫ້ເກີດມີຄວາມຊັກຊ້າຈາກເຫດຜົນໃດໜຶ່ງ ຫຼື ເຫດສຸດວິໃສ, ຜູ້ປະກັນໄພ ມີໜ້າທີ່ຮັບຜິດຊອບໃຫ້ການຮ່ວມມືກັບຜູ້ຊື້ປະກັນໄພ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການປະກອບເອກະສານດຳເນີນການຮ້ອງຂໍສິນປະກັນໄພ.

ຂໍ້ຂັດແຍ່ງທີ່ເກີດຈາກສັນຍາປະກັນໄພແບບບັງຄັບ ຕ້ອງໄດ້ຮັບການແກ້ໄຂບົນພື້ນຖານການເຈລະຈາ, ໄກ່ເກ່ຍ ລະຫວ່າງຄູ່ກໍລະນີ, ຖ້າບໍ່ສາມາດໄກ່ເກ່ຍກັນໄດ້ ຕ່າງຝ່າຍຕ່າງມີສິດທີ່ສະເໜີເຖິງຂະບວນການຍຸຕິທຳເພື່ອພິຈາລະນາ.

## ໝວດທີ 3
## ຄ່າປະກັນໄພ ແລະ ສິນປະກັນໄພ ຂອງ ປະກັນໄພລົດແບບບັງຄັບ

### ມາດຕາ 7 ຄ່າປະກັນໄພ

ຄ່າປະກັນໄພລົດແບບບັງຄັບ ຖືກກຳນົດເປັນອັດຕາດຽວແບບຄົງທີ່ ໂດຍແຍກຕາມປະເພດລົດ ແລະ ລັກສະນະການນຳໃຊ້ລົດ ດັ່ງນີ້:

| ປະເພດລົດ | ຄ່າປະກັນໄພ ຕໍ່ປີ ເປັນກີບ |
|---|---|
| **ລົດ 02 ລໍ້** | |
| **ລົດ 02 ລໍ້ ສ່ວນຕົວ** | |
| - ຫຼຸດ 50 ເຊເຊ | 50,000 |
| - 50 – 124 ເຊເຊ | 100,000 |
| - 125 ເຊເຊ ຂຶ້ນໄປ | 140,000 |
| **ລົດ02 ລໍ້ ຮັບຈ້າງ** | |
| - ຫຼຸດ 50 ເຊເຊ | 75,000 |
| - 50 – 124 ເຊເຊ | 150,000 |
| - 125 ເຊເຊ ຂຶ້ນໄປ | 200,000 |
| **ລົດ 03 ລໍ້ ຫຼື ຕຸກໆ ຈຳໂບ້** | 250,000 |
| **ລົດ 04 ລໍ້ ສ່ວນຕົວ:** | |
| - ຫຼຸດ 2,000 ເຊເຊ | 240,000 |
| - 2,000 ເຊເຊ ຂຶ້ນໄປ | 260,000 |
| **ລົດ 04 ລໍ້ ຮັບຈ້າງ** | |
| - ຫຼຸດ 2,000 ເຊເຊ | 460,000 |
| - 2,000 ເຊເຊ ຂຶ້ນໄປ | 550,000 |
| **ລົດບັນທຸກ ສ່ວນຕົວ:** | |
| - ແຕ່ 3,5 ໂຕນ ຫາ 10 ໂຕນ | 440,000 |
| - ຫຼາຍກວ່າ 10 ໂຕນ | 560,000 |
| **ລົດບັນທຸກ ຮັບຈ້າງ:** | |
| - 3,5 ໂຕນ ຫາ 10 | 660,000 |
| - ຫຼາຍກວ່າ 10 ໂຕນ | 740,000 |

| | |
|---|---|
| **<u>ລົດຂົນສົ່ງໂດຍສານ ສ່ວນຕົວ:</u>**<br>- ແຕ່ 08 ຫາ 12 ບ່ອນນັ່ງ<br>- ແຕ່ 13 ຫາ 39 ບ່ອນນັ່ງ<br>- ຫຼາຍກວ່າ 40 ບ່ອນນັ່ງ<br>**<u>ລົດຂົນສົ່ງໂດຍສານ ລົດຮັບຈ້າງ:</u>**<br>- ແຕ່ 08 ຫາ 12 ບ່ອນນັ່ງ<br>- ແຕ່ 13 ຫາ 39 ບ່ອນນັ່ງ<br>- ຫຼາຍກວ່າ 40 ບ່ອນນັ່ງ | <br>400,000<br>610,000<br>740,000<br><br>610,000<br>740,000<br>860,000 |
| **<u>ເຄື່ອງລົດພ່ວງ ສ່ວນຕົວ</u>**<br>- ແຕ່ 01 ໂຕນ ຫາ 03 ໂຕນ<br>- ແຕ່ 03 ຫາ 10 ໂຕນ<br>- ຫຼາຍກວ່າ 10 ໂຕນ<br>**<u>ເຄື່ອງລົດພ່ວງ ຮັບຈ້າງ:</u>**<br>- ແຕ່ 01 ໂຕນ ຫາ 03 ໂຕນ<br>- ແຕ່ 03 ຫາ 10 ໂຕນ<br>- ຫຼາຍກວ່າ 10 ໂຕນ | <br>190,000<br>250,000<br>310,000<br><br>250,000<br>310,000<br>370,000 |
| **<u>ເຄື່ອງກົນຈັກ</u>**<br>- ຫຼຸດ 10 ໂຕນ<br>- ຫຼາຍກວ່າ 10 ໂຕນ | <br>250,000<br>310,000 |

ຜູ້ປະກັນໄພ ບໍ່ສາມາດຄິດໄລ່ຄ່າປະກັນໄພລົດແບບບັງຄັບ ແຕກຕ່າງຈາກອັດຕາທີ່ໄດ້ກຳນົດໄວ້ໃນຕາຕະລາງຂ້າງເທິງນີ້, ເຊິ່ງອັດຕາຄ່າປະກັນໄພລົດແບບບັງຄັບທີ່ກຳນົດ ໃນຂໍ້ຕົກລົງສະບັບນີ້ ແມ່ນຍັງບໍ່ໄດ້ລວມຄ່າອາກອນມູນຄ່າເພີ່ມ ແລະ ຄ່າຂຶ້ນທະບຽນ (ການບວກອັດຕາຄ່າອາກອນມູນຄ່າເພີ່ມ ແລະ ຄ່າຂຶ້ນທະບຽນ ແມ່ນໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ).

**ມາດຕາ 8 ສິນປະກັນໄພ**

ສິນປະກັນໄພ ແມ່ນ ກຳນົດເປັນອັດຕາດຽວ ດັ່ງນີ້:

| ປະເພດຂອງການຄຸ້ມຄອງ | ວົງເງິນປະກັນໄພ (ກີບ) |
|---|---|
| **<u>ຄວາມເສຍຫາຍທາງດ້ານຮ່າງກາຍ</u>** | |
| - ເສຍຊີວິດ ຫຼື ພິການຖາວອນ ທັງໝົດ (ສູງສຸດຕໍ່ຄົນ) | 15,000,000 |
| - ຄ່າປິ່ນປົວ (ສູງສຸດຕໍ່ຄົນ) | 3,000,000 |
| (ໃນນັ້ນຄ່າບາລີສູ່ຂວັນກໍລະນີນອນໂຮງໝໍເກີນ 24 ຊົ່ວໂມງຕິດຕໍ່ກັນ) | 500,000 |
| ຄວາມເສຍຫາຍດ້ານຮ່າງກາຍ ສູງສຸດຕໍ່ອຸປະຕິເຫດ | 125,000,000 |
| **<u>ຄວາມເສຍຫາຍທາງດ້ານວັດຖຸ</u>** | 6,000,000 |

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງຜູ້ປະກັນໄພ ແລະ ຜູ້ຊື້ປະກັນໄພ

### ມາດຕາ 9 ສິດ ແລະ ໜ້າທີ່ ຂອງຜູ້ປະກັນໄພ

ຜູ້ປະກັນໄພ ມີສິດ ແລະ ໜ້າທີ່ ຄື:

- ຈຳໜ່າຍປະກັນໄພລົດແບບບັງຄັບ ໃຫ້ແກ່ຍານພາຫະນະທຸກຊະນິດ ທີ່ຂຶ້ນທະບຽນຢ່າງຖືກຕ້ອງ;
- ຮຽກຮ້ອງໃຫ້ຜູ້ຊື້ປະກັນໄພ ກວດກາສະພາບລົດກ່ອນການເຮັດສັນຍາປະກັນໄພ ແລະ ລາຍງານຂໍ້ມູນທີ່ເປັນຄວາມຈິງ ເພື່ອປະກອບເຂົ້າໃນສັນຍາປະກັນໄພ;
- ສ້າງຕັ້ງລະບົບການຕອບຮັບສາຍດ່ວນ ເພື່ອຮັບປະກັນການໃຫ້ບໍລິການສັງຄົມຕະຫຼອດ 24 ຊົ່ວໂມງ;
- ສະໜອງຂໍ້ມູນໃຫ້ແກ່ຜູ້ຊື້ປະກັນໄພ ຢ່າງທ່ວງທັນໃນເວລາເກີດອຸບັດຕິເຫດ, ພ້ອມທັງແນະນຳ ແລະ ໃຫ້ຂໍ້ມູນກ່ຽວກັບຄວາມຮັບຜິດຊອບທາງແພ່ງ ຕໍ່ບຸກຄົນທີສາມ ຂອງການປະກັນໄພລົດແບບບັງຄັບ;
- ໃຫ້ຄວາມຮ່ວມມືຢ່າງໃກ້ຊິດກັບຜູ້ຊື້ປະກັນໄພ ແລະ ບຸກຄົນທີສາມ ໃນເວລາເກີດອຸບັດຕິເຫດ ແລະ ຕ້ອງດຳເນີນການປະເມີນຄວາມເສຍຫາຍເບື້ອງຕົ້ນພາຍໃນ 24 ຊົ່ວໂມງ;
- ແຈ້ງໃຫ້ຜູ້ຊື້ປະກັນໄພ ຊາບກ່ຽວກັບການສິ້ນສຸດສັນຍາປະກັນໄພ ພາຍໃນ 15 ວັນ ກ່ອນວັນທີສິ້ນສຸດສັນຍາ;
- ປະກອບສ່ວນມອບພັນທະເຂົ້າກອງທຶນປົກປ້ອງຜູ້ຖືກເຄາະຮ້າຍຕາມເສັ້ນທາງ ຕາມມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;
- ໃຫ້ຄວາມຮ່ວມມືກັບອົງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການປະກັນໄພລົດແບບບັງຄັບ;
- ເອົາໃຈໃສ່ເກັບກຳຂໍ້ມູນ ທີ່ຈຳເປັນໃນການຮ້ອງຂໍສິນປະກັນໄພ ພາຍໃຕ້ຄວາມຮັບຜິດຊອບຂອງຕົນ.

### ມາດຕາ 10 ສິດ ແລະ ໜ້າທີ່ ຂອງຜູ້ຊື້ປະກັນໄພ

ຜູ້ຊື້ປະກັນໄພ ມີສິດ ແລະ ໜ້າທີ່ ຄື:

- ໄດ້ຮັບການຄຸ້ມຄອງຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ ແລະ ຈ່າຍຄ່າທຳນຽມປະກັນໄພໃຫ້ຄົບຖ້ວນກ່ອນການອອກສັນຍາປະກັນໄພ ຫຼື ຕາມການຕົກລົງກັນຂອງຜູ້ປະກັນໄພ ແລະ ຜູ້ຊື້ປະກັນໄພ;
- ຕ້ອງໄດ້ຖືສັນຍາປະກັນໄພ (ສະບັບແທ້ ຫຼື ຮູບພາບທີ່ບັນທຶກໄວ້ໃນຂໍ້ມູນເອເລັກໂຕຣນິກ) ເມື່ອມີການນຳໃຊ້ລົດ ເຄື່ອນໄຫວຕາມເສັ້ນທາງ ໃນດິນແດນ ສ.ປ.ປ ລາວ;
- ປະຕິບັດ ແລະ ເຄົາລົບ ຕາມກົດໝາຍການຈະລາຈອນທາງບົກ ເພື່ອຄວາມປອດໄພບົນຕາມເສັ້ນທາງ;
- ຕ້ອງແຈ້ງໃຫ້ຜູ້ປະກັນໄພຊາບຢ່າງທັນການ ໃນເວລາເກີດອຸບັດຕິເຫດ;
- ເອົາໃຈໃສ່ເກັບກຳຂໍ້ມູນ ທີ່ຈຳເປັນໃນເວລາດຳເນີນການຮ້ອງຂໍສິນປະກັນໄພ ພາຍໃຕ້ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 5
## ການຄຸ້ມຄອງປະກັນໄພລົດແບບບັງຄັບ

### ມາດຕາ 11 ການສະໜອງ (ຈຳໜ່າຍ) ແກ່ສັງຄົມ

ກະຊວງການເງິນ ເປັນຜູ້ຄຸ້ມຄອງ ລະບຽບການປະກັນໄພລົດແບບບັງຄັບທັງໝົດ ຢ່າງລວມສູນໃນຂອບເຂດທົ່ວປະເທດ ເພື່ອໃຫ້ ຜູ້ປະກັນໄພ ສະໜອງການບໍລິການແກ່ສັງຄົມ, ເຊິ່ງຜູ້ປະກັນໄພຕ້ອງລາຍງານຍອດປະກັນໄພລົດແບບບັງຄັບທຸກເດືອນ.

ຜູ້ປະກັນໄພ ເປັນຜູ້ສະໜອງຜະລິດຕະພັນປະກັນໄພລົດແບບບັງຄັບ ແລະ ໃຫ້ບໍລິການແກ່ສັງຄົມໃນຂອບເຂດທົ່ວປະເທດ ເຊິ່ງການສະໜອງຜະລິດຕະພັນປະກັນໄພ ຜູ້ປະກັນໄພຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້.

ໃນການສະໜອງປະກັນໄພລົດແບບບັງຄັບແກ່ຜູ້ຊື້ປະກັນໄພນັ້ນ ຜູ້ປະກັນໄພ ບໍ່ສາມາດເພີ່ມຄ່າປະກັນໄພ (Malus) ໃນກໍລະນີເກີດອຸປະຕິເຫດໃນປີຜ່ານມາ ຫຼື ໃຫ້ສ່ວນຫຼຸດ (Discount) ໃນກໍລະນີບໍ່ເກີດອຸປະຕິເຫດໃນປີຜ່ານມາ.

### ມາດຕາ 12 ຊ່ອງທາງການສະໜອງ

ຜູ້ຊື້ປະກັນໄພ ສາມາດຊື້ຜະລິດຕະພັນປະກັນໄພລົດແບບບັງຄັບ ໂດຍຜ່ານຊ່ອງທາງດັ່ງນີ້:

- ບໍລິສັດປະກັນໄພ (Direct sale);
- ຕົວແທນປະກັນໄພ (Insurance Agent);
- ນາຍໜ້າປະກັນໄພ (Insurance Broker);
- ອອນລາຍ (Online);
- ການຂາຍໂດຍຜ່ານຊ່ອງທາງອື່ນ.

### ມາດຕາ 13 ຄ່າຕອບແທນການຂາຍປະກັນໄພ

ຜູ້ປະກັນໄພ ສາມາດຈ່າຍຄ່າຕອບແທນການຂາຍປະກັນໄພລົດແບບບັງຄັບ (Commission) ໃຫ້ແກ່ຕົວແທນ ແລະ ນາຍໜ້າປະກັນໄພ ຫຼື ຜູ້ທີ່ເຮັດໜ້າທີ່ຊ່ວຍຈຳໜ່າຍຜະລິດຕະພັນປະກັນໄພລົດແບບບັງຄັບ (ຜູ້ທີ່ໄດ້ຮັບອະນຸຍາດຂາຍ ໂດຍຜ່ານການຂາຍ ຜ່ານຊ່ອງທາງອື່ນ) ບໍ່ເກີນ ສິບຫ້າ ສ່ວນຮ້ອຍ (15 %) ຂອງຄ່າປະກັນໄພ ທີ່ບໍ່ລວມ ອາກອນມູນຄ່າເພີ່ມ ຄ່າປະກອບເຂົ້າໃນກອງທຶນປົກປ້ອງຜູ້ຖືກເຄາະຮ້າຍຕາມເສັ້ນທາງ (RVPF) 1% ຂອງຄ່າປະກັນໄພ ແລະ ຄ່າຂຶ້ນທະບຽນ.

### ມາດຕາ 14 ພັນທະຕໍ່ສັງຄົມ

ຜູ້ປະກັນໄພ ຕ້ອງຫັກຄ່າປະກັນໄພຍານພາຫະນະ (ແບບສະໝັກໃຈ ແລະ ແບບບັງຄັບ) ທີ່ໄດ້ຮັບຈາກຜູ້ຊື້ປະກັນໄພ ໃນອັດຕາ 1 % ຂອງຄ່າທຳນຽມການປະກັນໄພລົດ ເພື່ອປະກອບເປັນພັນທະ ສົມທົບເຂົ້າກອງທຶນປົກປ້ອງຜູ້ຖືກເຄາະຮ້າຍ ຕາມເສັ້ນທາງ (RVPF); ການມອບເງິນສົມທົບເຂົ້າກອງທຶນດັ່ງກ່າວ ແມ່ນປະຕິບັດ ໜຶ່ງຄັ້ງ ຕໍ່ປີ, ໂດຍໃຫ້ແຈ້ງມອບສຳເລັດກ່ອນວັນທີ 31 ມີນາ ຂອງປີຖັດໄປ.

**1.** ຂໍ້ກໍານົດການຈ່າຍເງິນສົມທົບ

ຜູ້ປະກັນໄພ (Insurers) ຕ້ອງໄດ້ຫັກ 1 % ຂອງຄ່າທໍານຽມປະກັນໄພ ຈາກຜູ້ຊື້ປະກັນໄພພາກສະໝັກໃຈ ແລະ ພາກບັງຄັບ ເພື່ອປະກອບສ່ວນເຂົ້າໃນກອງທຶນ (RVPF); ການປະກອບສ່ວນແມ່ນການປະຕິບັດພັນທະ ເພື່ອສະໜັບສະໜູນ ຊ່ວຍເຫຼືອບຸກຄົນທີ່ໄດ້ຮັບຜົນກະທົບ ຈາກອຸປະຕິເຫດຕາມເສັ້ນທາງ, ເພື່ອຮັບປະກັນວ່າພວກເຂົາເຈົ້າໄດ້ຮັບສະຫວັດດີການ ແລະ ສາມາດຟື້ນຕົວໄດ້.

**2.** ການຄຸ້ມຄອງທຶນເພື່ອຮັບປະກັນຄວາມໂປ່ງໃສ

**ກ.** ຂັ້ນຕອນການຈັດສັນທຶນປະຈໍາປີ

ເງິນທຶນຕ້ອງໄດ້ຈັດສັນເຂົ້າໃນກອງທຶນ (RVPF) ເປັນປະຈໍາທຸກປີ; ຜູ້ປະກັນໄພ (Insurers) ຕ້ອງດໍາ ເນີນຕາມຂັ້ນຕອນການຈັດສັນໃຫ້ສໍາເລັດພາຍໃນວັນທີ 31 ມີນາ ຂອງປີຖັດໄປ.

**ຂ.** ມາດຕະການເພື່ອຄວາມໂປ່ງໃສ

ຈະຕ້ອງໄດ້ລາຍງານກ່ຽວກັບການບໍລິຫານ ແລະ ການນໍາໃຊ້ກອງທຶນ ຕໍ່ພາກສ່ວນກ່ຽວຂ້ອງ; ຜູ້ປະກັນໄພ (ບໍລິສັດປະກັນໄພ) ມີໜ້າທີ່ເປີດເຜີຍວິທີການ ທີ່ໃຊ້ໃນການກໍານົດ.

**3.** ການປະເມີນປະສິດທິຜົນດ້ານພັນທະຕໍ່ສັງຄົມ

ການປະເມີນອັດຕາການປະກອບສ່ວນ 1% ຈະຕ້ອງໄດ້ຮັບການປະເມີນໃນໄລຍະເວລາ 03 ປີ ນັບຈາກມີການສ້າງຕັ້ງກອງທຶນ (RVPF); ການປັບອັດຕາເງິນປະກອບສ່ວນຄວນພິຈາລະນາ ບົນພື້ນຖານຈາກການປະເມີນຜົນກະທົບ ຕໍ່ຜູ້ໄດ້ຮັບການປະກັນໄພ ແລະ ປະສິດທິຜົນຂອງການນໍາໃຊ້ກອງທຶນ.

ອັດຕາດັ່ງກ່າວຈະໄດ້ທົດລອງໃນໄລຍະເວລາ 03 ປີ ພາຍຫຼັງການສ້າງຕັ້ງກອງທຶນປົກປ້ອງຜູ້ຖືກເຄາະຮ້າຍຕາມເສັ້ນທາງ (RVPF) ຫຼັງຈາກນັ້ນ, ຈະໄດ້ປະເມີນອັດຕາໃໝ່ ຕາມຄວາມເໝາະສົມກັບສະພາບການຕົວຈິງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 15 ມາດຕະການຕໍ່ຜູ້ລະເມີດ

ຜູ້ປະກັນໄພ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ຊື້ປະກັນໄພ ບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ ຕາມກໍລະນີເບົາ ຫຼື ໜັກ;

ສໍາລັບຜູ້ປະກັນໄພ ນອກຈາກການປະຕິບັດມາດຕະການຕາມວັກໜຶ່ງຂ້າງເທິງແລ້ວ, ກະຊວງການເງິນສາມາດດໍາເນີນການປັບໃໝ ຕາມແຕ່ລະກໍລະນີຂອງການຝ່າຝືນນັ້ນ ດັ່ງນີ້:

- ຜູ້ປະກັນໄພທີ່ຝ່າຝືນ ຫຼື ບໍ່ປະຕິບັດຕາມ ມາດຕາ 7, ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ສອງລ້ານກີບ ແລະ ຖ້າເປັນກໍລະນີກະທາຜິດຕໍ່ເນື່ອງ ຈະຖືກປັບໃໝອີກບໍ່ເກີນວັນລະ ໜຶ່ງລ້ານກີບ ຕະຫຼອດເວລາທີ່ຍັງຝ່າຝືນຢູ່;

- ຜູ້ປະກັນໄພທີ່ຝ່າຝືນ ຫຼື ບໍ່ປະຕິບັດຕາມ ມາດຕາ 11 ວັກສອງ, ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ໜຶ່ງລ້ານ ກີບ ແລະ ຖ້າເປັນກໍລະນີກະທຳຜິດຕໍ່ເນື່ອງ ຈະຖືກປັບໃໝອີກບໍ່ເກີນວັນລະ ຫ້າແສນກີບ ຕະຫຼອດເວລາທີ່ຍັງຝ່າຝືນຢູ່.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ບໍລິສັດປະກັນໄພແບບບັງຄັບ, ຜູ້ປະກັນໄພ ອື່ນໆ, ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ຈະມີຜົນສັກສິດ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ; ສຳລັບຂໍ້ຕົກລົງສະບັບເລກທີ 0228/ກງ ລົງວັນທີ 04 ກຸມພາ 2009 ແມ່ນຖືກລົບລ້າງ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ເປັນຕົ້ນໄປ.

**ລັດຖະມົນຕີ**

ສັນຕິພາບ ພົມວິຫານ